ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ

ເລກທີ 87 /ຄລສພ

ນະຄອນຫຼວງວຽງຈັນ, ວັນທີ 25 ເມສາ 2021

# ຄໍາສັ່ງແນະນໍາ
## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນ ໃນການສືບຕໍ່ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ພະຍາດໂຄວິດ-19

ນັບແຕ່ຕົ້ນປີ 2020 ເປັນຕົ້ນມາ, ມວນມະນຸດ ໄດ້ປະເຊີນໜ້າກັບການລະບາດ ຂອງເຊື້ອພະຍາດຈຸລະໂລກອັກເສບປອດສາຍພັນໃໝ່ (Covid-19) ເຊິ່ງແມ່ນໂລກລະບາດທີ່ຮ້າຍແຮງບັ້ນໜຶ່ງໃນປະຫວັດສາດ ຂອງມວນມະນຸດ ທີ່ພວມເປັນມະຫັນຕະໄພຂົ່ມຂູ່, ສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍຢ່າງມະຫາສານ ຕໍ່ເສດຖະກິດ-ສັງຄົມ ກໍຄື ຊີວິດ, ສຸຂະພາບ ແລະ ຊັບສິນ ຂອງບັນດາປະເທດ ແລະ ປະຊາຊົນ ໃນຂອບເຂດທົ່ວໂລກ. ຢູ່ ສປປ ລາວ ກໍບໍ່ອາດຫຼີກພົ້ນຈາກໄພອັນຕະລາຍ ຂອງເຊື້ອພະຍາດດັ່ງກ່າວ; ໃນໜຶ່ງປີຜ່ານມາ ດ້ວຍຄວາມຮັບຜິດຊອບການເມືອງ, ຄວາມບຸກບືນສູ້ຊົນ ແລະ ການຮ່ວມແຮງຮ່ວມໃຈ ຂອງທຸກສ່ວນ ໃນທົ່ວລະບົບການເມືອງ, ທົ່ວສັງຄົມ ແລະ ດ້ວຍການຮ່ວມມື, ຊ່ວຍເຫຼືອອັນລໍ້າຄ່າ ຈາກປະເທດເພື່ອນມິດສາກົນ ກໍຄືອົງການຈັດຕັ້ງສາກົນ, ສປປ ລາວ ໄດ້ຕັ້ງໜ້າເອົາໃຈໃສ່ສະກັດກັ້ນ, ຄວບຄຸມ, ປ້ອງກັນ ແລະ ແກ້ໄຂການລະບາດຂອງພະຍາດ Covid-19 ມີຜົນສໍາເລັດເປັນຢ່າງດີ, ສາມາດຄວບຄຸມພະຍາດໃນເບື້ອງຕົ້ນ ບໍ່ໃຫ້ແຜ່ລະບາດເປັນວົງກວ້າງ ແລະ ແກ້ໄຂກໍລະນີການຕິດເຊື້ອໄດ້ແຕ່ຫົວທີ; ເສດຖະກິດ-ສັງຄົມ ໂດຍລວມເຖິງວ່າໄດ້ຮັບຜົນກະທົບຢ່າງຫຼີກລຽງບໍ່ໄດ້, ແຕ່ກໍ່ພະຍາຍາມແກ້ໄຂບັນຫາທີ່ເປັນພື້ນຖານ, ສາມາດຮັກສາສະຖຽນລະພາບທາງການເມືອງ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍ ດ້ວຍຄວາມເປັນເຈົ້າການ.

ເຖິງວ່າພວກເຮົາໄດ້ຮັບຜົນສໍາເລັດໃນເບື້ອງຕົ້ນ, ແຕ່ສະພາບການລະບາດຍັງບໍ່ສະຫງົບລົງຢ່າງຂາດຕົວ ທັງມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງຢູ່ທົ່ວໂລກ ແລະ ປະເທດໃກ້ຄຽງຈໍານວນໜຶ່ງ; ຢູ່ປະເທດເຮົາ ກໍຍັງມີຄວາມຊຸມສ່ຽງໃນຫຼາຍດ້ານ ເຊິ່ງພາຍໃນເດືອນ ເມສາ 2021 ໄດ້ເກີດກໍລະນີການນໍາເຂົ້າເຊື້ອພະຍາດ ແລະ ກໍລະນີຕົວການແຜ່ກະຈາຍເຊື້ອ (Super Spreader) ເຊິ່ງເຮັດໃຫ້ມີຜູ້ຕິດເຊື້ອເພີ່ມທະວີຂຶ້ນເປັນສອງ ແລະ ສາມຕົວເລກ ພາຍໃນເວລາບໍ່ເທົ່າໃດມື້ ຢູ່ໃນ 6 ແຂວງ ແລະ ນະຄອນຫຼວງວຽງຈັນ ຈົນຕ້ອງໄດ້ປິດ (Lock Down) ນະຄອນຫຼວງວຽງຈັນ ກໍຄືແຂວງຈໍານວນໜຶ່ງ. ຕໍ່ສະພາບດັ່ງກ່າວນັ້ນ ໄດ້ສ້າງຄວາມວິຕົກກັງວົນ ແລະ ຄວາມເປັນຫ່ວງຕໍ່ສະຖຽນລະພາບດ້ານເສດຖະກິດ-ສັງຄົມ, ທັງເປັນສິ່ງທ້າທາຍທົດສອບ ຕໍ່ການນໍາພາ-ຄຸ້ມຄອງຂອງຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ບໍ່ໜ້ອຍ; ບົນພື້ນຖານນັ້ນ ຄະນະເລຂາທິການສູນ



สแกนด้วย CamScanner

ກາງພັກ ຈຶ່ງອອກຄໍາສັ່ງແນະນໍາ ມາຍັງຄະນະພັກທຸກຂັ້ນ ໂດຍສະເພາະຄະນະພັກ ກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ດັ່ງນີ້:

1. ຄະນະພັກແຕ່ລະຂັ້ນ ຕ້ອງມີຄວາມເປັນເອກະພາບກັນວ່າ ຕ້ອງຖືການຕ້ານ, ສະກັດກັ້ນ, ຄວບຄຸມ ແລະ ປ້ອງກັນ ພະຍາດ Covid-19 "ເປັນໜ້າທີ່ຍຸດທະສາດສໍາຄັນ ແລະ ຮີບດ່ວນ ໃນການນໍາພາຊີ້ນໍາ ແລະ ບັນຊາຕົວຈິງ ຄືໃນພາວະສົງຄາມ". ອັນນີ້ ຖືເປັນປັດໃຈສໍາຄັນຕັດສິນກວ່າໝູ່ ທີ່ຈະຮັບປະກັນໃຫ້ປະເທດເຮົາ ສາມາດຄວບຄຸມການແຜ່ລະບາດ ຂອງເຊື້ອພະຍາດດັ່ງກ່າວ. ຄາດໝາຍໃຫຍ່ ແມ່ນຕ້ອງຮັບປະກັນ "ບໍ່ໃຫ້ມີການລະບາດຄັ້ງໃໝ່ ແລະ ລະບາດຮອບໃຫຍ່ທີ່ທະວີຄູນຂຶ້ນກວ່າເກົ່າ" ເຊິ່ງຈະນໍາໄປສູ່ການສ້າງຄວາມສູນເສຍດ້ານຊີວິດ, ສຸຂະພາບ ກໍ່ຄືຜົນກະທົບທີ່ບໍ່ສົມເຫດສົມຜົນ ຕໍ່ເສດຖະກິດ-ສັງຄົມ ແລະ ເດັດຂາດບໍ່ໃຫ້ມີຄວາມສັບສົນວຸ່ນວາຍເກີດຂຶ້ນໃນສັງຄົມ.

2. ໃຫ້ຄະນະພັກແຕ່ລະຂັ້ນ ສືບຕໍ່ ຕິດຕາມ, ຕີລາຄາ ແລະ ປະເມີນສະຖານະການ ການລະບາດ ຂອງພະຍາດ Covid-19 ຢ່າງໃກ້ຊິດ ເພື່ອສືບຕໍ່ຈັດຕັ້ງປະຕິບັດ ທິດຊີ້ນໍາທີ່ກໍານົດອອກໃນຄໍາສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 07/ຄລສພ ລົງວັນທີ 6 ເມສາ 2020 ວ່າດ້ວຍເພີ່ມທະວີການນໍາພາຊີ້ນໍາ ຕໍ່ການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງເຊື້ອພະຍາດ Covid-19 ແລະ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ Covid-19 ໃຫ້ເຂັ້ມງວດ ແລະ ມີປະສິດທິຜົນສູງ. ພ້ອມກັນນັ້ນ ກໍໃຫ້ຄົ້ນຄວ້າ, ວາງມາດຕະການ ຮັບມື, ແກ້ໄຂ ແລະ ຟື້ນຟູຜົນກະທົບດ້ານເສດຖະກິດ-ສັງຄົມ ແຕ່ຫົວທີ, ບັນທັງມາດຕະການແກ້ໄຂຜົນກະທົບໂດຍກົງ ຕໍ່ການດໍາລົງຊີວິດປະຈໍາວັນ ກໍ່ຄື ການເຄື່ອນໄຫວວຽກງານ ຂອງພະນັກງານ, ທະຫານ, ຕໍາຫຼວດ, ການຜະລິດ-ທຸລະກິດ ຂອງຜູ້ປະກອບການ ແລະ ປະຊາຊົນທົ່ວໄປ.

ໃຫ້ເອົາໃຈໃສ່ປະກອບເຄື່ອງມື, ສິ່ງອໍານວຍຄວາມສະດວກ ໃຫ້ແກ່ການປະຕິບັດໜ້າທີ່ ຂອງພະນັກງານ, ແພດໝໍ ແລະ ບຸກຄະລາກອນອື່ນໆ ທີ່ມີໜ້າທີ່ໂດຍກົງກັບພະຍາດ Covid-19, ທັງຄົ້ນຄວ້າປະຕິບັດນະໂຍບາຍ ທາງດ້ານວັດຖຸ ແລະ ຈິດໃຈ ຕໍ່ເຂົາເຈົ້າຢ່າງເໝາະສົມ.

ຕ້ອງສືບຕໍ່ປະຕິບັດຢ່າງເຂັ້ມງວດ ແລະ ເຄັ່ງຄັດ ກ່ຽວກັບມາດຕະການປ້ອງກັນ ໂດຍມີການຕິດຕາມ, ກວດກາ ແລະ ປະເມີນຜົນ ຢ່າງເປັນປະຈໍາ; ບໍລິເວນໃດ, ທ້ອງຖິ່ນໃດ ຫຼືຂະແໜງການວຽກງານໃດ ທີ່ຍັງມີຄວາມສ່ຽງສູງ ກໍ່ໃຫ້ສືບຕໍ່ປິດ (Lock Down) ແລະ ພິຈາລະນາຫຼຸດຜ່ອນມາດຕະການຄວບຄຸມລົງເປັນກ້າວໆ ໃນແຕ່ລະໄລຍະ ຕາມການປ່ຽນແປງທີ່ຕັ້ງໜ້າ ຂອງການປ້ອງກັນ ແລະ ຄວບຄຸມໄດ້ ພະຍາດ Covid-19 ເຂົ້າສູ່ປົກກະຕິ.

3. ລັດຖະບານ ກໍ່ຄື ອົງການປົກຄອງແຕ່ລະຂັ້ນ ປະເມີນຄວາມສ່ຽງ ການລະບາດ ຂອງພະຍາດ ເພື່ອກະກຽມບຸກຄະລາກອນ, ເຄື່ອງມື, ອຸປະກອນການແພດ, ຢາປະເພດຕ່າງໆ ບັນທັງຄວາມອາດສາມາດຮອງຮັບດ້ານສະຖານທີ່ກັກກັນ ແລະ ປິ່ນປົວພະຍາດ ໃນກໍລະນີຕ່າງໆ.

ເພີ່ມທະວີຄວາມເປັນເຈົ້າ ໃນການປະສານງານ, ການຍາດແຍ່ງຄວາມຊ່ວຍເຫຼືອ, ການຮ່ວມມື ດ້ານການແພດ, ດ້ານສາທາລະນະສຸກ ກັບປະເທດໃກ້ຄຽງ, ປະເທດເພື່ອນມິດ



สแกนด้วย CamScanner

ຕ່າງໆ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ ເພື່ອສະກັດກັ້ນ, ປ້ອງກັນ ແລະ ຄວບຄຸມ ການລະບາດ ຂອງພະຍາດ Covid-19

4. ໃຫ້ຈັດຕັ້ງນຳພາ ການວາງແຜນ, ຈັດສັນ ແລະ ສັກຢາ ວັກແຊງ ປ້ອງກັນພະຍາດ Covid-19 ໃຫ້ແຕ່ລະເປົ້າໝາຍໃນແຕ່ລະໄລຍະ ຢ່າງເປັນລະບົບ, ຄົບຖ້ວນ, ທົ່ວເຖິງ ແລະ ຮັບປະກັນ ຄວາມເປັນລະບຽບຮຽບຮ້ອຍ; ຕ້ານປະກົດການຫຍໍ້ທໍ້ ກໍຄືການສວຍໂອກາດທຸກຮູບແບບ ທີ່ບໍ່ດີ ຕໍ່ບັນຫາດັ່ງກ່າວ.

5. ໃຫ້ຄະນະພັກແຕ່ລະຂັ້ນ ຊີ້ນຳເອົາໃຈໃສ່ບັນຫາການໂຄສະນາ, ສຶກສາອົບຮົມ, ສ້າງຄວາມຮັບຮູ້ເຂົ້າໃຈ ແລະ ປະຕິບັດຖືກຕ້ອງ ວິທີການປ້ອງກັນພະຍາດ, ເຮັດເປັນປະຈຳ ແລະກາຍເປັນວັດທະນະທຳໃໝ່ ໃນການດຳລົງຊີວິດປະຈຳວັນ ຢູ່ໃນສັງຄົມ (ປິດປາກ-ດັງ, ລ້າງມື, ເວັ້ນໄລຍະຫ່າງ). ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຕ້ອງເປັນແບບຢ່າງນຳໜ້າ ແລະເປັນເຈົ້າການ ປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂພະຍາດ Covid-19, ພ້ອມນັ້ນກໍປະຕິບັດມາດຕະການທາງວິໄນ, ການລົງໂທດ ຕໍ່ພະນັກງານ, ເຈົ້າໜ້າທີ່ລັດ ແລະ ບຸກຄົນໃດ ທີ່ລະເມີດຄຳສັ່ງ, ລະບຽບການຕ່າງໆ ຢ່າງເຂັ້ມງວດ ແລະ ເດັດຂາດ.

6. ໃຫ້ສືບຕໍ່ຊີ້ນຳການພັນລະຫຍາຍຈັດຕັ້ງປະຕິບັດການຫັນເປັນທັນສະໄໝ ເພື່ອຮັບໃຊ້ການບໍລິຫານ-ຄຸ້ມຄອງ ແລະແກ້ໄຂວຽກງານ ຢ່າງຮອບດ້ານ, ໃນເງື່ອນໄຂສະພາບຫຍຸ້ງຍາກແນວນີ້ ບັນຫາການຫັນເປັນທັນສະໄໝ ກໍ່ເປັນປັດໃຈພື້ນຖານຮັບປະກັນໃຫ້ວຽກງານຕ່າງໆ ບໍ່ພຽງແຕ່ບໍ່ໃຫ້ຢຸດສະຫງັກ ຫາກຍັງເພີ່ມປະສິດທິພາບ ແລະ ເພີ່ມຄຸນນະພາບຂຶ້ນຕື່ມອີກ; ຮັບປະກັນການພົວພັນປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ ລວມທັງການປະຊຸມທາງໄກ.

7. ຄະນະພັກແຕ່ລະຂັ້ນ ຊີ້ນຳການແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອປະຊາສຳພັນ, ແຈ້ງຂໍ້ມູນຂ່າວສານ ທີ່ຖືກຕ້ອງ, ຕົວຈິງ, ເປັນທາງການ ໃຫ້ແກ່ສັງຄົມ ຢ່າງວ່ອງໄວ, ທັນການ; ຕີກອຍຂໍ້ມູນທີ່ບິດເບືອນ, ສ້າງສະຖານະການ ເຮັດໃຫ້ສັງຄົມເກີດຄວາມສັບສົນ, ລະແວງສົງໄສ ແລະ ຂາດຄວາມເຊື່ອໝັ້ນ ຕໍ່ການບໍລິຫານຄຸ້ມຄອງ ຂອງລັດເຮົາ.

8. ທົ່ວພັກ, ທົ່ວລັດ, ທົ່ວກຳລັງ ປະກອບອາວຸດ ແລະ ພົນລະເມືອງລາວ ທຸກຄົນ ມີໜ້າທີ່, ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການ ເຂົ້າຮ່ວມຂະບວນການ ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ພະຍາດ Covid-19; ປະກອບ ສ່ວນດ້ານສະຕິປັນຍາ, ເຫື່ອແຮງ, ກຳລັງຊັບ, ວັດຖຸສິ່ງຂອງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ຮັບມື ແລະ ແກ້ໄຂ ການລະບາດ ຂອງພະຍາດ Covid-19ໄດ້ຮັບຜົນສຳເລັດ ແລະ ຜ່ານພົ້ນມະຫັນຕະໄພຮ້າຍດັ່ງກ່າວ.

ຕ. ຄະນະເລຂາທິການສູນກາງພັກ
ຜູ້ປະຈຳການ

ປອ ບຸນທອງ ຈິດມະນີ

ບ່ອນສົ່ງ:

- ສະຫາຍກຳມະການກົມການເມືອງສູນກາງພັກ
- ສະຫາຍເລຂາທິການສູນກາງພັກ
- ສະຫາຍກຳມະການສູນກາງພັກ
- ຫ້ອງວ່າການສູນກາງພັກ
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ
- ຄະນະເລຂາທິການສະພາແຫ່ງຊາດ
- ສຳເນົາໄວ້

สแกนด้วย CamScanner